## ທ່ານຈະໄດ້ຮັບການກວດສອບ ຫຼື ສັກຢາວັກຊິນໂລກຕັບ B ໄດ້ຢູ່ບ່ອນໃດ?

◆ ໃຫ້ຖາມທ່ານໝໍ ຫຼື ຄລີນິກຂອງທ່ານ ກ່ຽວກັບການກວດສອບໂລກຕັບ B. ຂໍໃຫ້ສັກຢາວັກຊີນໂລກຕັບ B ສໍາຫຼັບຕົນເອງ, ລູກຂອງທ່ານ ແລະ ສະມາຊິກຄອບຄົວຂອງທ່ານ.

◆ ຖ້າທ່ານບໍ່ມີທ່ານໝໍ, ໃຫ້ໂທຫາພະແນກສາທາຣະນະສຸກທ້ອງຖິ່ນຂອງທ່ານ ເພື່ອຮູ້ຈັກວ່າເຂົາເຈົ້າໄດ້ຮັບການກວດສອບ ຫຼື ສັກຢາປ້ອງກັນໂລກຕັບ B ຫຼືບໍ່.



ໃຫ້ປ້ອງກັນຕົນເອງ, ລູກຂອງທ່ານ, ແລະ ສະມາຊິກຄອບຄົວຂອງທ່ານຈາກໂລກຕັບ B. ການສັກຢາວັກຊີນໂລກຕັບ B ສາມເທື່ອ ສາມາດປ້ອງກັນທ່ານຈາກພຍາດອັນຮ້າຍແຮງນີ້ກໍໄດ້.

ຖ້າທ່ານຕ້ອງການຣາຍລະອຽດເພີ່ມເຕີມ ກ່ຽວກັບໂລກຕັບ B ໃຫ້ໂທຫາທ່ານໝໍຂອງທ່ານ, ພະແນກສາທາຣະນະສຸກທ້ອງຖິ່ນ, ພະແນກສຸຂະພາບແມ່ແລະເດັກໄດ້ທີ່ເລກໂທ 1-800-322-2588.

Washington State Department of Health

**1-800-322-2588**
*Information and Referral Line*

A service of
Healthy Mothers, Healthy Babies
Coalition of Washington

ເພື່ອຂໍເອົາປື້ມນ້ອຍສບັບນີ້
ເປັນຮູບແບບອື່ນ, ກະຣຸນາໂທຫາ

1-800-525-0127

DOH PUB 348-046 7/98

# ສິ່ງທີ່ຄົນເອເຊັຍ ແລະ ຊາວເກາະປາຊີຟິກ ຕ້ອງຮູ້ຈັກ ກ່ຽວກັບ ໂລກຕັບ B (HEPATITIS B)



Laotian

**ຄົນ**ທີ່ເປັນເຊື້ອສາຍຈາກຄົນເອເຊັຍ ແລະ ຊາວເກາະປາຊີຟິກ ມີການສ່ຽງສູງກວ່າທີ່ຈະເປັນໂລກຕັບ B. ນີ້ກໍເພາະວ່າມັກມີ ໂລກຕັບ B ໃນບໍລິເວນເອເຊັຍຕາເວັນອອກສຽງໃຕ້, ປະເທດຈີນ, ແລະ ເກາະປາຊີຟິກ.



## ໂລກຕັບ B ແມ່ນຫຍັງ?

ໂລກຕັບ B ແມ່ນພະຍາດຮ້າຍແຮງທີ່ເກີດຈາກເຊື້ອວາຍຣັສທີ່ທຳຮ້າຍຕັບ. ມັນສາມາດທຳຮ້າຍຕັບ, ເຮັດໃຫ້ເກີດໂລກມະເລງຕັບ, ແລະເຖິງແກ່ເສັຍຊີວິດໄດ້

ມີຫຼາຍຄົນທີ່ເປັນໂລກຕັບ B ບໍ່ໄດ້ຮູ້ສຶກເຈັບປ່ວຍ ແລະອາດຈະບໍ່ຮູ້ຈັກວ່າໄດ້ເປັນແລ້ວ. ລູກແລະສະມາຊິກຄອບຄົວຂອງເຂົາສາມາດຕິດໂລກຕັບ B ຈາກເຂົາໄດ້ໂດຍບໍ່ຮູ້ສຶກໂຕ.

ເດັກອ່ອນ ແລະ ເດັກນ້ອຍທີ່ຕິດໂລກຕັບ B ມີການສ່ຽງສູງຫຼາຍໃນການຕິດໂລກຕລອດຊີວິດ ແລະ ມີພຍາດຕັບເໝືອນຜູ້ໃຫຍ່.

## ໂລກຕັບ B ຕິດຕໍ່ກັນໄດ້ແນວໃດ?

ໂລກຕັບ B ຕິດຕໍ່ກັນຈາກຄົນນຶ່ງໄປຫາຄົນນຶ່ງໄດ້ ໂດຍທາງເລືອດທີ່ມີເຊື້ອໂລກ ຫຼື ຂອງແຫຼວຂອງຮ່າງກາຍບາງຊະນິດ. ທາງທີ່ຈະຕິດຕໍ່ກັນໄດ້ ກໍຄື:

- ◆ ໃນລະຫວ່າງຄູ່ຮ່ວມເພດ
- ◆ ຈາກແມ່ເຖິງລູກ ໃນເວລາອອກລູກ
- ◆ ໂດຍການໃຊ້ເຂັມສັກຢາຮ່ວມກັນ, ມີດແຖ, ຕຸ້ມຫູ, ຫຼື ຟອຍຜັດແຂ້ວ
- ◆ ໂດຍການຫຸ້ຳອາຫານປ້ອນລູກນ້ອຍ

ຕາມທຳມະດາໂລກຕັບ B ບໍ່ໄດ້ຕິດຕໍ່ກັນໂດຍທາງ:

- ◆ ການຈາມ
- ◆ ການໄອ
- ◆ ການໃຊ້ຖ້ວຍຈານຮ່ວມກັນ
- ◆ ການຈັບມືກັນ
- ◆ ນ້ຳນົມແມ່

ເຖິງແມ່ນວ່າທ່ານເປັນໂລກຕັບ B ຢູ່ ທ່ານຍັງສາມາດລ້ຽງລູກດ້ວຍນົມຕົນເອງໄດ້ໂດຍມີຄວາມປອດພັຍ ແຕ່ວ່າຕ້ອງເຊົາທັນທີ ຖ້າວ່າຫົວນົມມີຮອຍແຕກ ຫຼື ເປັນບາດເປື່ອຍໃສ່ນົມ ຂອງທ່ານ.

**ຖ້າຫາກວ່າທ່ານຢູ່ກັບຄົນທີ່ຕິດໂລກຕັບ B ທ່ານຕ້ອງຣະມັດຣະວັງທີ່ສຸດ. ໃຫ້ຮັບການກວດສອບໂລກຕັບ B ແລະຖ້າບໍ່ໄດ້ປ້ອງກັນເທື່ອ, ໃຫ້ສັກຢາປ້ອງກັນໂລກຕັບ B ສາມເທື່ອເພື່ອປ້ອງກັນຕົວ.**

## ໃຜຕ້ອງການສັກຢາວັກຊີນໂລກຕັບ B?

- ◆ ຖ້າທ່ານເປັນເຊື້ອສາຍຊາວເອເຊັຍ ຫຼື ຊາວເກາະປາຊີຟິກ, ການໃຫ້ທ່ານແລະຄອບຄົວຂອງທ່ານ ຮັບການກວດສອບໂລກຕັບ B ສຳຄັນຫຼາຍ. ຖ້າທ່ານບໍ່ໄດ້ປ້ອງກັນຕົວເທື່ອ, ການສັກຢາວັກຊີນໂລກຕັບ B ສາມເທື່ອຈະປ້ອງກັນທ່ານໄດ້.
- ◆ ເດັກອ່ອນທີ່ເກີດຢູ່ສະຫະຣັດທຸກຄົນຕ້ອງໄດ້ສັກຢາວັກຊີນໂລກຕັບ B ສາມເທື່ອ.
- ◆ ຖ້າລູກຂອງທ່ານເກີດຢູ່ປະເທດອື່ນ ຫຼື ທ່ານບໍ່ແນ່ໃຈວ່າເຂົາເຈົ້າໄດ້ຮັບການສັກຢາວັກຊີນຫຼືຍັງ, ໃຫ້ຕິດຕໍ່ກັບທ່ານໝໍ ຫຼື ຄລີນິກຂອງທ່ານ ເພື່ອແນ່ໃຈວ່າລູກຂອງທ່ານໄດ້ຮັບການປ້ອງກັນເຕັມສ່ວນ.

